ສວັນນີ
SOUVANNY
Home Center

ບິດລາຍງາມປະຈຳໄຕມາດ3
ສິ້ນສຸດ 30 ກັນຍາ 2026



Call center
021-561111

ສາລະບານ

I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ.

1. ວິໄສທັດ. 1
2. ພາລະກິດ. 1
3. ປະຫວັດຄວາມເປັນມາຂອງ ສຸວັນນີ. 1

II. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ. 3

III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ 4

IV. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2026 5

V. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ 6

1. ໂຄງຮ່າງການຈັດຕັ້ງພາຍໃນຂອງບໍລິສັດ 6
2. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ. 7

2.1. ສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ 7
2.2. ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ. 8
2.3. ຄະນະຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. 12

3. ການເຄື່ອນໄຫວຂອງສະພາບໍລິຫານ 9 ເດືອນສະສົມ ປີ 2026. 13
4. ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ 13

VI. ຄວາມຮັບຜິດຊອບຕໍ່ສັງຄົມ. 13

1. ການມອບພັນທະອາກອນ. 13
2. ການອຸປະຖຳ ແລະ ການຊ່ວຍເຫຼືອສັງຄົມ. 14

VII. ນະໂຍບາຍກ່ຽວກັບການຄວບຄຸມພາຍໃນ 16

VIII. ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ 16

I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ.

1. ວິໄສທັດ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈະເປັນຜູ້ນຳການພັດທະນາ ການຄ້າວັດສະດຸກໍ່ສ້າງ, ເຄື່ອງຕົກແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ທີ່ທັນສະໄໝໃນທຸກຊ່ອງທາງການຂາຍ ເພື່ອຕອບສະໜອງລູກຄ້າທຸກລະດັບໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ.

2. ພາລະກິດ

- ພັດທະນາການນຳເອົາສິນຄ້າດ້ານວັດສະດຸກໍ່ສ້າງ, ເຄື່ອງຕົກແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ຈາກທຸກຂົງເຂດ ທີ່ມີຄຸນນະພາບ, ລາຄາຍຸດຕິທຳໄປສູ່ທຸກກຸ່ມລູກຄ້າ ແລະ ທຸກ ພື້ນທີ່ ຂອງປະເທດລາວ ຄຽງຄູ່ປະກອບສ່ວນເປັນອົງປະກອບໜຶ່ງທີ່ຂັບເຄື່ອນເສດຖະກິດລາວ.
- ພັດທະນາການບໍລິການ ແລະ ການສົ່ງມອບ ໃນທຸກຊ່ອງທາງການຂາຍທັງອອບລາຍ ແລະ ອອນລາຍ ໃຫ້ ທັນສະໄໝ.
- ເສີມສ້າງຄວາມສາມາດ ຂອງບຸກຄະລາກອນ ແລະ ພະນັກງານສືບທອດຢ່າງຕໍ່ເນື່ອງ ເພື່ອໃຫ້ມີສັກກະຍະ ພາບສາມາດຮັບມືກັບການປ່ຽນແປງ ຂອງເທັກໂນໂລຢີໃໝ່ ໃນໄລຍະປ່ຽນຜ່ານ ແລະ ພຶດຕິກຳ ຂອງຜູ້ ບໍລິໂພກໃນຍຸກໃໝ່.
- ພັດທະນາການເຊື່ອມໂຍງການຄ້າຂອງລາວໃຫ້ຕິດພັນກັບການຄ້າ ຂອງອາຊຽນ ແລະ ໂລກ ໃນຖານະທີ່ ປະເທດລາວເປັນໃຈກາງຂອງພາກພື້ນ.
- ຮັກສາທຸກຜົນປະໂຫຍດ ຂອງທຸກພາກສ່ວນ ທີ່ມີສ່ວນໄດ້ສ່ວນເສຍກັບບໍລິສັດ ພ້ອມກັບປະກອບສ່ວນ ຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເພື່ອພັດທະນາຕາມທິດສີຂຽວຍືນຍົງ.

3. ປະຫວັດຄວາມເປັນມາຂອງ ສຸວັນນີ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "SVN") ດຳເນີນທຸລະກິດຈັດຈຳ ໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ເຄື່ອງຕົກແຕ່ງເຮືອນ ແລະ ອາຄານແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງ ສ້າງຫຼັກຈົນເຖິງວັດສະດຸຕົກແຕ່ງພາຍໃນ ເຊັ່ນ: ກະໂລ້, ສຸຂະພັນ, ນ້ຳສີ, ວັດສະດຸຕົກແຕ່ງເຮືອນ ແລະ ອາຄານ ສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນິເຈີ ລວມທັງການໃຫ້ບໍລິການແບບຄົບວົງ ຈອນໃຫ້ແກ່ລູກຄ້າ ເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງນ້ຳ-ຫ້ອງຄົວ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ. ສິນຄ້າ ສ່ວນຫຼາຍນຳເຂົ້າຈາກຕ່າງປະເທດ ເປັນສິນຄ້າທີ່ມີຄຸນນະພາບ ຍີ່ຫໍ້ສິນຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບ ລະດັບສາກົນ ໂດຍມີລະບົບໂປຣແກຣມຄອມພິວເຕີທີ່ທັນສະໄໝໃນການຈັດການດ້ານການຈຳໜ່າຍ ແລະ ຄວບຄຸມສິນຄ້າໃນສາງຢ່າງມີປະສິດທິພາບ. ສິນຄ້າແບ່ງອອກເປັນຫຼາຍກວ່າ 20 ໝວດຜະລິດຕະພັນ ເພື່ອຕອບ ສະໜອງຄວາມຕ້ອງການຂອງລູກຄ້າກ່ຽວກັບການກໍ່ສ້າງ ແລະ ຕົກແຕ່ງອາຄານ ພາຍໃຕ້ຄຳຂວັນທີ່ວ່າ: **“ຍົກ ລະດັບດ້ານຄຸນນະພາບສິນຄ້າ ແລະ ການບໍລິການໃຫ້ກົງກັບຄວາມຕ້ອງການ ຂອງກຸ່ມລູກຄ້າເປົ້າໝາຍ ສ້າງ ຄວາມເພິ່ງພໍໃຈໃຫ້ລູກຄ້າ ຄວບຄຸມຂະບວນການປະຕິບັດງານໃຫ້ໄດ້ມາດຕະຖານ ພັດທະນາຢ່າງຕໍ່ເນື່ອງ”.** ການຈັດຈຳໜ່າຍສິນຄ້າຮູບແບບທັນສະໄໝ ພາຍໃນສູນສະແດງສິນຄ້າຂະໜາດໃຫຍ່ (Showroom) ພາຍໃຕ້ ເຄື່ອງໝາຍການຄ້າ “**ສຸວັນນີ**” (Souvanny) ທີ່ໃຫຍ່ເປັນອັນດັບໜຶ່ງໃນ ສປປ ລາວ.

ຮ້ານ ສຸວັນນີ ການຄ້າ ໄດ້ເລີ່ມສ້າງຕັ້ງຂຶ້ນໃນປີ 1988 ໂດຍ ທ່ານ ນາງ ສຸວັນນີ ສຸຄະບັນດິດ, ທ່ານ ວັດດາ ນາ ສຸຄະບັນດິດ ແລະ ທ່ານ ພັນໂນລາ ສຸຄະບັນດິດ ທີ່ ບ້ານ ສີສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງ ຈັນ (ສາຂາທົ່ງຂັນຄຳ) ດ້ວຍທຶນຈົດທະບຽນເບື້ອງຕົ້ນ 3,250,000 ກີບ. ໃນປີ 1993 ບໍລິສັດ ຈຶ່ງໄດ້ມີການຈົດ

ທະບຽນເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ດ້ວຍທຶນຈົດທະບຽນ 100,000,000 ກີບ. ໃນປີ 2000 ທຸລະກິດຂອງບໍລິສັດໄດ້ຮັບການຕອບສະໜອງທີ່ດີຂຶ້ນ ແລະ ໄດ້ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ, ປະກອບກັບ ທ່ານ ກິດສະດາ ສຸຄະບັນດິດ ໄດ້ສຳເລັດການສຶກສາຈາກຕ່າງປະເທດ ແລະ ກໍ່ໄດ້ເຂົ້າມາມີບົດບາດໃນການບໍລິຫານທຸລະກິດໃຫ້ມີຄວາມເຂັ້ມແຂງຂຶ້ນ. ສະນັ້ນ, ບໍລິສັດໄດ້ເປີດ “ສາຂາໂພນຕ້ອງ” ຂຶ້ນ ເພື່ອຈັດຈຳໜ່າຍ ວັດສະດຸກໍ່ສ້າງ, ຕົກແຕ່ງ, ສ້ອມແປງບ້ານ ແບບຄົບວົງຈອນ ໂດຍຈັດວາງໃນສູນສະແດງສິນຄ້າ ທີ່ທັນສະໄໝເປັນຮ້ານທຳອິດຂອງ ສປປ ລາວ ແລະ ມີການຍ້າຍສຳນັກງານໃຫຍ່ຈາກ ສາຂາ ທົ່ງຂັນຄຳ ມາເປັນ ສາຂາ ໂພນຕ້ອງ (ສຳນັກງານໃຫຍ່ໃນປັດຈຸບັນ). ໃນປີ 2004 ບໍລິສັດ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຄື: ສາຂາ ສີໄຄ ທີ່ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໃນປີ 2015 ບໍລິສັດ ໄດ້ປ່ຽນຮູບແບບວິສາຫະກິດ ຈາກ ບໍລິສັດ ສຸວັນນີການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ມາເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດ, ດ້ວຍທຶນຈົດທະບຽນ 500,000,000 ກີບ. ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2015 ວັນທີ 28 ກໍລະກິດ 2015 ທີ່ໄດ້ມີວາລະພິຈາລະນາປັບປຸງມູນຄ່າທີ່ກຳນົດຮຸ້ນຂອງບໍລິສັດ ຈາກເດີມ 50,000 ກີບຕໍ່ຮຸ້ນ ເປັນ 2,000 ກີບຕໍ່ຮຸ້ນ, ພິຈາລະນາເລື່ອງການເພີ່ມທຶນຂອງບໍລິສັດ ຈາກເດີມ 500,000,000 ກີບ ເປັນ 280 ຕື້ກີບ ໂດຍມີຈຳນວນຮຸ້ນທັງໝົດ 140,000,000 ຮຸ້ນ, ບໍລິສັດ ໄດ້ມີການຮ່ວມລົງທຶນກັບ ບໍລິສັດ ໂກບອນ ອິນເຕີເນຊັນແນວ ຈຳກັດ ເຊິ່ງເປັນຜູ້ປະກອບການຈັດຈຳໜ່າຍວັດສະດຸກໍ່ສ້າງ ແລະ ຕົກແຕ່ງອາຄານແບບຄົບວົງຈອນໃນປະເທດໄທ ໂດຍການຮ່ວມລົງທຶນດັ່ງກ່າວຍັງເປັນການຖ່າຍທອດຄວາມຮູ້ໃນການດຳເນີນທຸລະກິດ (Know-how) ແລະ ເສີມສ້າງສັກກະຍະພາບໃນການແຂ່ງຂັນທາງທຸລະກິດຂອງ ບໍລິສັດໃນໄລຍະຍາວ ໂດຍຄອບຄົວສຸຄະບັນດິດຖືຮຸ້ນ 60% ແລະ ບໍລິສັດໂກບອນອິນເຕີເນຊັນແນວຖືຮຸ້ນ 40%. ໃນວັນທີ 13 ກັນຍາ 2015 ບໍລິສັດໄດ້ມີການປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 3/2015 ໂດຍມີວາລະທີ່ສຳຄັນ ຄື: ການແປສະພາບເປັນບໍລິສັດມະຫາຊົນ ແລະ ໄດ້ປ່ຽນຊື່ ເປັນ “ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ” ພ້ອມກັບໄດ້ເພີ່ມທຶນຈົດທະບຽນເພື່ອຮອງຮັບການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 50 ຕື້ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 25,000,000 ຮຸ້ນ, ມູນຄ່າກຳນົດ (Par Value) 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນການເປັນບໍລິສັດຊັ້ນນຳທາງດ້ານຈັດຈຳໜ່າຍສິນຄ້າ ແລະ ບໍລິການ ດ້ານວັດສະດຸກໍ່ສ້າງ ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ໃນ ສປປ ລາວ. ໃນວັນທີ 11 ທັນວາ 2015 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ນຳຮຸ້ນເຂົ້າແລກປ່ຽນ-ຊື້ຂາຍ ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດ (First Trading Day). ໃນວັນທີ 30 ມັງກອນ 2017 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຢູ່ພາຍໃນນະຄອນຫຼວງວຽງຈັນຄື: ສາຂາ ໂຊກໃຫຍ່ ເຊິ່ງຕັ້ງຢູ່ເສັ້ນທາງ 450 ປີ ບ້ານ ໂຊກໃຫຍ່ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ. ໃນວັນທີ 30 ກັນຍາ 2017 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຄື: ສາຂາ ປາກຊັນ ຢູ່ທີ່ ບ້ານ ສີສະອາດ ເມືອງ ປາກຊັນ ແຂວງ ບໍລິຄຳໄຊ. ໃນວັນທີ 31 ມີນາ 2018 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການປິດບໍລິການ ສາຂາ ທົ່ງຂັນຄຳ. ໃນວັນທີ 17 ມິຖຸນາ 2018 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຄື: ສາຂາ ປາກເຊ ສະຖານທີ່ຕັ້ງຢູ່ ບ້ານ ກາງ ເມືອງ ປາກເຊ ແຂວງ ຈຳປາສັກ. ໃນວັນທີ 01 ກໍລະກິດ 2019 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການປິດບໍລິການ ສາຂາ ທົ່ງຕູມ. ໃນວັນທີ 02 ມີນາ 2020 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຄື: ສາຂາ ທ່າແຂກ ຢູ່ທີ່ ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ. ໃນວັນທີ 14 ທັນວາ ປີ 2021 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມ ເຊິ່ງເປັນສາຂາທີ 7 ຄື: ສາຂາ ສະຫວັນນະເຂດ ຕັ້ງຢູ່ ບ້ານ ໂພນ ສະຫວ່າງເໜືອ, ນະຄອນໄກສອນພົມວິຫານ, ແຂວງ ສະຫວັນນະເຂດ. ໃນວັນທີ 09 ມິຖຸນາ 2023 ບໍລິສັດ ສຸ

ວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເປີດການຊື້-ຂາຍຮຸ້ນກູ້ຄັ້ງທຳອິດ ໃນຕະຫຼາດຫຼັກຊັບລາວ ເຊິ່ງມີມູນຄ່າຮຸ້ນກູ້ 3 ລ້ານໂດລາສະຫະລັດ ຫຼື ປະມານ 51,6 ຕື້ກີບ, ມູນຄ່າກຳນົດ 50,000 ໂດລາສະຫະລັດ ຕໍ່ໜ່ວຍ, ອັດຕາດອກເບ້ຍ 7.50% ຕໍ່ປີ ແລະ ມີອາຍຸຮຸ້ນກູ້ 4 ປີ ເພື່ອໃຫ້ບໍລິສັດມີເງິນທຶນໃນການດຳເນີນທຸລະກິດ ຫຼື ຊຳລະຄືນເງິນກູ້ຂອງສະຖາບັນການເງິນ ຫຼື ໃຊ້ໃນການລົງທຶນຂະຫຍາຍສາຂາ ຫຼື ໃຊ້ເປັນທຶນໝຸນວຽນຂອງບໍລິສັດ.ໃນວັນທີ 13 ຕຸລາ 2024 ສຸວັນນີ ໂຮມເຊັນເຕີ ເປີດສາຂາໃໝ່ ສາຂາທີ 8 ສາຂາຫຼວງພະບາງ ຢ່າງເປັນທາງການ ທີ່ບ້ານ ພອນໄຊ, ນະຄອນຫຼວງພະບາງ ແຂວງຫຼວງພະບາງ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າບໍ່ຕ່ຳກ່ວາ 15,000 ຕາແມັດ ມີສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ເພື່ອຕອບໂຈດຕາມຄວາມຕ້ອງການຂອງລູກຄ້າ. ໃນວັນທີ 08 ພະຈິກ 2025 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສາຂາທີ 9 ຢ່າງເປັນທາງການ ຕັ້ງຢູ່ ບ້ານ ສົມສະໜຸກ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ ເປັນອາຄານ 3 ຊັ້ນ ລວມເນື້ອທີ່ວາງສະແດງສິນຄ້າຫຼາຍກວ່າ 24,000 ຕາແມັດ ແລະ ເນື້ອທີ່ສາງຫຼາຍກວ່າ 1,107 ຕາແມັດ.

II. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ

1. ລາຍໄດ້:

- ລາຍໄດ້ສະສົມ 9 ເດືອນປີ 2026 ເທົ່າກັບ 857,468 ລ້ານກີບ ເມື່ອປຽບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເຫັນວ່າເພີ່ມຂຶ້ນ 152,352 ລ້ານກີບ ຫຼື ຄິດເປັນ 21.61 ສ່ວນຮ້ອຍ ເພີ່ມຂຶ້ນເນື່ອງຈາກວ່າ ບໍລິສັດໄດ້ມີການ ເພີ່ມຄວາມຫຼາກຫຼາຍຂອງສິນຄ້າ, ໄດ້ມີການຈັດໂປຣໂມຊັ່ນຕ່າງໆ ເພື່ອສົ່ງເສີມໃຫ້ລູກຄ້າມີຄວາມສົນໃຈໃນການບໍລິການຫຼາຍຂຶ້ນ ແລະ ມີລາຍຮັບເພີ່ມຈາກແຕ່ລະສາຂາ ໂດຍສະເພາະເພີ່ມຈາກສາຂາເປີດໃໝ່ກໍ່ຄື: ສາຂາ ສົມສະໜຸກ ທີ່ເປີດໃນທ້າຍປີ 2025.
- ລາຍໄດ້ປະຈຳໄຕມາດ 3 ປີ 2026 ເທົ່າກັບ 266,738 ລ້ານກີບ ເມື່ອປຽບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເຫັນວ່າເພີ່ມຂຶ້ນ 32,960 ລ້ານກີບ ຫຼື ຄິດເປັນ 14.10 ສ່ວນຮ້ອຍ ເພີ່ມຂຶ້ນເນື່ອງຈາກວ່າບໍລິສັດໄດ້ມີການ ເພີ່ມຄວາມຫຼາກຫຼາຍຂອງສິນຄ້າ, ໄດ້ມີການຈັດໂປຣໂມຊັ່ນຕ່າງໆ ເພື່ອສົ່ງເສີມໃຫ້ລູກຄ້າມີຄວາມສົນໃຈໃນການບໍລິການຫຼາຍຂຶ້ນ ແລະ ມີລາຍຮັບເພີ່ມຈາກແຕ່ລະສາຂາ ໂດຍສະເພາະເພີ່ມຈາກສາຂາເປີດໃໝ່ກໍ່ຄື: ສາຂາ ສົມສະໜຸກ ທີ່ເປີດໃນທ້າຍປີ 2025.

2. ລາຍຈ່າຍ:

- ລາຍຈ່າຍສະສົມ 9 ເດືອນປີ 2026 ເທົ່າກັບ 158,107 ລ້ານກີບ ເມື່ອປຽບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເຫັນວ່າເພີ່ມຂຶ້ນ 31,543 ລ້ານກີບ ຫຼື ຄິດເປັນ 24.92 ສ່ວນຮ້ອຍ ເພີ່ມຂຶ້ນຈາກລາຍຈ່າຍໃນການຂາຍ, ລາຍຈ່າຍການບໍລິຫານ ແລະ ສ່ວນໜຶ່ງແມ່ນເພີ່ມຈາກລາຍຈ່າຍຂອງສາຂາ ທີ່ເປີດໃໝ່ຄື: ສາຂາ ສົມສະໜຸກ.
- ລາຍຈ່າຍປະຈຳໄຕມາດ 3 ປີ 2026 ເທົ່າກັບ 54,941 ລ້ານກີບ ເມື່ອປຽບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເຫັນວ່າເພີ່ມຂຶ້ນ 11,183 ລ້ານກີບ ຫຼື ຄິດເປັນ 25.56 ສ່ວນຮ້ອຍ ເພີ່ມຂຶ້ນເນື່ອງຈາກມີລາຍຈ່າຍໃນການຂາຍ ແລະ ການບໍລິຫານເພີ່ມຂຶ້ນ.

3. ກຳໄລ/ຂາດທຶນ:

- ກຳໄລສຸດທິສະສົມ 9 ເດືອນ ປີ 2026 ເທົ່າກັບ 49,404 ລ້ານກີບ.
- ກຳໄລສຸດທິປະຈຳ ໄຕມາດ 3 ປີ 2026 ເທົ່າກັບ 13,517 ລ້ານກີບ.

4. ຊັບສິນ:

- ມີຊັບສິນລວມສິ້ນສຸດ ວັນທີ 30 ກັນຍາ ປີ 2026 ເທົ່າກັບ 2,146,951 ລ້ານກີບ ເມື່ອປຽບທຽບໃສ່ສິ້ນ ສຸດ ວັນທີ 31 ທັນວາ 2025 ເຫັນວ່າຫຼຸດລົງ 46,972 ລ້ານກີບ ຫຼື ຄິດເປັນ -2.14 ສ່ວນຮ້ອຍ ເນື່ອງຈາກ ການຫຼຸດລົງຂອງເງິນສົດ ແລະ ທຽບເທົ່າເງິນສົດ ທີ່ນຳໄປຈ່າຍຊຳລະໜີ້ສິນໄລຍະສັ້ນ ເຊັ່ນ: ເຈົ້າໜີ້ການຄ້າ, ເງິນກູ້ຢືມທະນາຄານທີ່ຄົບກຳນົດ ແລະ ຊັບສິນບໍ່ໝຸນວຽນຫຼຸດລົງທາງບັນຊີຈາກຄ່າຫຼ້ຽຫ້ຽນ ແລະ ຈາກ ການແປງຄ່າອັດຕາແລກປ່ຽນ.

5. ໜີ້ສິນ:

- ມີໜີ້ສິນລວມສິ້ນສຸດ ວັນທີ 30 ກັນຍາ ປີ 2026 ເທົ່າກັບ 424,098 ລ້ານກີບ ເມື່ອປຽບທຽບໃສ່ ວັນທີ 31 ທັນວາ 2025 ເຫັນວ່າຫຼຸດລົງ 55,955 ລ້ານກີບ ຫຼື ຄິດເປັນ -11.66% ຈາກການຊຳລະຄືນເງິນເບີກ ເກີນບັນຊີ, ເງິນກູ້ໄລຍະສັ້ນ, ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ.

6. ທຶນ:

- ມີທຶນຕົນເອງລວມສິ້ນສຸດ ວັນທີ 30 ກັນຍາ ປີ 2026 ເທົ່າກັບ 1,722,852 ລ້ານກີບ ເມື່ອປຽບທຽບໃສ່ ວັນທີ 31 ທັນວາ 2025 ເຫັນວ່າເພີ່ມຂຶ້ນ 8,982 ລ້ານກີບ ຫຼື ຄິດເປັນ 0.52 ສ່ວນຮ້ອຍ ເພີ່ມຂຶ້ນເນື່ອງ ຈາກກຳໄລສຸດທິສະສົມ.

ໝາຍເຫດ:
ສຳລັບຕົວເລກ ຜົນການດຳເນີນງານແມ່ນ ອີງຕາມເອກະສານລາຍງານການເງິນ.

III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆຂອງບໍລິສັດ

1. ທີ່ຕັ້ງ ແລະ ເຄືອຂ່າຍ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ມີ ສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ , ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ເຊິ່ງໃນປັດຈຸບັນ ມີ 9 ສາຂາ ໃນນັ້ນຢູ່ນະຄອນຫຼວງວຽງຈັນມີ 4 ສາຂາ ແລະ ອີກ 5 ສາຂາ ຢູ່ຕ່າງແຂວງ ໄດ້ແກ່:

1) ສາຂາ ໂພນຕ້ອງ ຕັ້ງຢູ່: ເລກທີ 366, ຖະໜົນ ໂພນຕ້ອງ, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທ 021 560 000 ແລະ 020 5608 2311.
2) ສາຂາ ສີໄຄ ຕັ້ງຢູ່: ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນ ຫຼວງວຽງຈັນ, ເບີໂທ 021 621 254 ແລະ 020 5884 2414.
3) ສາຂາ ໂຊກໃຫຍ່ ຕັ້ງຢູ່: ຖະໜົນ 450, ບ້ານ ໂຊກໃຫຍ່, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ, ເບີໂທ 021 466 009 ແລະ 020 5511 2509.
4) ສາຂາ ປາກຊັນ ຕັ້ງຢູ່: ຖະໜົນເລກທີ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິ ຄຳໄຊ, ເບີໂທ 054 791 026 ແລະ 020 5809 7558.
5) ສາຂາ ປາກເຊ ຕັ້ງຢູ່: ຖະໜົນເລກທີ 38 ບ້ານ ກາງ, ເມືອງ ນະຄອນປາກເຊ, ແຂວງ ຈຳປາ ສັກ, ເບີໂທ 031 514 091 ແລະ 020 5620 6753.
6) ສາຂາ ທ່າແຂກ ຕັ້ງຢູ່: ຖະໜົນເລກທີ 13 ໃຕ້, ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳ

ມ່ວນ, ເບີໂທ 051 212 353 ແລະ 020 9407 1293.

7) ສາຂາ ສະຫວັນນະເຂດ ຕັ້ງຢູ່: ຖະໜົນເລກ 09, ບ້ານ ໂພນສະຫວ່າງເໜືອ, ນະຄອນໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ, ເບີໂທ 041 215 858 ແລະ 020 9558 8289.

8) ສາຂາ ຫຼວງພະບາງ ຕັ້ງຢູ່: ຖະໜົນເລກ 13 ເໜືອ, ບ້ານ ພອນໄຊ, ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ, ເບີໂທ 071 021 455 ແລະ 020 5400 3930.

9) ສາຂາ ສີມສະໝຸກ ຕັ້ງຢູ່: ຖະໜົນ ທ່າເດື່ອ, ບ້ານ ສີມສະໝຸກ, ເມືອງ ຫາດຊາຍຟອງ, ນະຄອນ ຫຼວງວຽງຈັນ, ເບີໂທ 021 811 616 ແລະ 020 9662 8986.

2. ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ

- ເບີໂທ: (+856-21) 415 645
- ເບີ Whatsapp: (+856-20) 96 935 223
- ອີເມວ: Souvanny@souvanny.la
- ເວັບໄຊ: www.souvanny.la
- App: Souvanny Retail App
- Facebook: Souvanny Home Center
- Line ID: @Souvanny
- Instagram: Souvanny Home Center
- TIKTOK: Souvanny Home Center

IV. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2026

➢ ທຶນຈົດທະບຽນ

ບໍລິສັດມີທຶນຈົດທະບຽນທັ້ງໝົດນະວັນທີ 30 ກັນຍາ 2026 ແມ່ນ 330,000,000,000 ກີບ ເປັນຮຸ້ນສາມັນຈຳນວນ 165,000,000 ຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2,000 ກີບ.


➢ ຜູ້ຖືຮຸ້ນ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງບໍລິສັດ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ໄດ້ແກ່:

- ຄອບຄົວສຸຄະບັນດິດ ຈຳນວນຮຸ້ນທີ່ຖືຄອງແມ່ນ 83,893,600 ຮຸ້ນເທົ່າກັບ 51 ສ່ວນຮ້ອຍ.
- ບໍລິສັດ ໂກບອນເຮົ້າ ອິນເຕີເນຊັນແນວ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 56,000,000 ຮຸ້ນເທົ່າກັບ 34 ສ່ວນຮ້ອຍ.

V. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ

1. ໂຄງຮ່າງການຈັດຕັ້ງພາຍໃນຂອງບໍລິສັດ



2. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ

2.1. ສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ



ທ່ານ ສົມຈິດ ອິນທະມິດ
ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ, ປະທານຄະນະກຳມະການຄັດເລືອກ ແລະ ຄຸ້ມຄອງຄວາມສ່ຽງ



ທ່ານ ຮສ.ປອ ໄຊພອນ ກອງມະນີລາ
ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ ແລະ ປະທານຄະນະກຳມະການກວດສອບ



ທ່ານ ວັດດານາ ສຸຄະບັນດິດ
ສະມາຊິກສະພາບໍລິຫານ
ຜູ້ອຳນວຍການໃຫຍ່



ທ່ານ ສອນສະຫວັນ ແສງອະໄພ
ສະມາຊິກສະພາບໍລິຫານ
ສະມາຊິກອິດສະຫຼະ, ປະທານຄະນະກຳມະການກຳນົດຄ່າຕອບແທນ



ທ່ານ ພັນໂນລາ ສຸຄະບັນດິດ
ສະມາຊິກສະພາບໍລິຫານ
ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ



ທ່ານ ບຸນທະວີ ສົມມາໄຊ
ສະມາຊິກສະພາບໍລິຫານ ແລະ ຜູ້ຈັດການຝ່າຍບັນຊີການເງິນ



ທ່ານ ກິດສະດາ ສຸຄະບັນດິດ
ສະມາຊິກສະພາບໍລິຫານ
ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍປະຕິບັດການ



ທ່ານ ນາງຊຸຕິການ ສີແສງຈັນ
ສະມາຊິກສະພາບໍລິຫານ



ທ່ານ ພິພິບ ວາດສະໜາອາຊາສະກຸນ
ສະມາຊິກສະພາບໍລິຫານ

2.2 ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ

1. ທ່ານ ສົມຈິດ ອິນທະມິດ



ວັນເດືອນປີເກີດ	13/03/1959
ສັນຊາດ	ລາວ
ວຸດການສຶກສາ	ປະລິນຍາໂທ ດ້ານເສດຖະສາດພັດທະນາ, ມະຫາວິທະຍາໄລ ມາກຕິນ ລຸເທີ ຣານ ເລ ວິດເຕີນແບກ, ປະເທດ ເຢຍລະມັນ ປີ 1985.
ຕຳແໜ່ງງານໃນປະຈຸບັນ	ປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມ ເຊັນເຕີ ມະຫາຊົນ.
ການເຂົ້າຮ່ວມກອງປະຊຸມຕ່າງໆ ສະສົມ 9 ເດືອນ ປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 3 ຄັ້ງ. - ກອງປະຊຸມຄະນະກຳມະການຄັດເລືອກ 1 ຄັ້ງ. - ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ 1 ຄັ້ງ

2. ທ່ານ ຮສ.ປອ ໄຊພອນ ກອງມະນີລາ



ວັນເດືອນປີເກີດ	30/12/1973
ສັນຊາດ	ລາວ
ວຸດການສຶກສາ	ປະລິນຍາເອກ ບໍລິຫານທຸລະກິດ ມະຫາວິທະຍາໄລ ຮິໂຣ້ຊິ່ມ່າ ປະເທດຍີ່ປຸ່ນ.
ຕຳແໜ່ງງານໃນປະຈຸບັນ	ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ ແລະ ປະທານຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.
ການເຂົ້າຮ່ວມກອງປະຊຸມຕ່າງໆ ສະສົມ 9 ເດືອນ ປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 2 ຄັ້ງ. - ກອງປະຊຸມຄະນະກຳມະການກວດສອບ 3 ຄັ້ງ.

3. ທ່ານ ວັດດານາ ສຸຄະບັນດິດ



ວັນເດືອນປີເກີດ	28/10/1966
ສັນຊາດ	ລາວ
ວຸດການສຶກສາ	ປະລິນຍາໂທ ບໍລິຫານທຸລະກິດ, ມະຫາວິທະຍາໄລມະຫາສາຣະຄາມ, ປະເທດໄທ
ຕຳແໜ່ງງານໃນປະຈຸບັນ	ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ການເຂົ້າຮ່ວມກອງປະຊຸມ ຕ່າງໆ ສະສົມ 9 ເດືອນປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 3 ຄັ້ງ. - ກອງປະຊຸມຄະນະກຳມະການກວດສອບ 3 ຄັ້ງ. - ກອງປະຊຸມຄະນະກຳມະການຄັດເລືອກ 1 ຄັ້ງ. - ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ 1 ຄັ້ງ - ກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ 1 ຄັ້ງ.

4. ທ່ານ ສອນສະຫວັນ ແສງອະໄພ



ວັນເດືອນປີເກີດ	30/6/1960
ສັນຊາດ	ລາວ
ວຸດການສຶກສາ	- ປະລິນຍາໂທ ກົດໝາຍ (ກົດໝາຍພາຍໃນຈາກມະຫາໄລແຫ່ງຊາດລັດຕັດຊິກ ກົດສະຖານອະດີດສະຫະພາບໂຊວຽດ), ປີ 1993. - ປະລິນຍາໂທ ກົດໝາຍ ຈຸລາລົງກອນມະຫາວິທະຍາໄລ, ບາງກອກ, ປະເທດໄທ, ປີ 2009.
ຕຳແໜ່ງງານໃນປະຈຸບັນ	ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ
ການເຂົ້າຮ່ວມກອງປະຊຸມ ຕ່າງໆ ສະສົມ 9 ເດືອນ ປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 3 ຄັ້ງ. - ກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ 1 ຄັ້ງ.

5. ທ່ານ ພັນໂນລາ ສຸຄະບັນດິດ



ວັນເດືອນປີເກີດ	22/09/1969
ສັນຊາດ	ລາວ
ວຸດການສຶກສາ	- ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລ ມະຫາສາລະຄາມ ປະເທດໄທ ປີ 2002. - ນັກຊ່ຽວຊານບັນຊີລາວ (CPA-XII) ຈັດໂດຍ ສະພາວິຊາຊີບການບັນຊີ ແລະ ກວດສອບລາວ, ກົມບັນຊີ, ກະຊວງການເງິນ, ປີ 2022.
ຕຳແໜ່ງງານໃນປະຈຸບັນ	ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.
ການເຂົ້າຮ່ວມກອງປະຊຸມຕ່າງໆ ສະສົມ 9 ເດືອນ ປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 3 ຄັ້ງ. - ກອງປະຊຸມຄະນະກຳມະການກວດສອບ 3 ຄັ້ງ. - ກອງປະຊຸມຄະນະກຳມະການຄັດເລືອກ 1 ຄັ້ງ. - ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ 1 ຄັ້ງ. - ກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ 1 ຄັ້ງ.

6. ທ່ານ ກິດສະດາ ສຸຄະບັນດິດ



ວັນເດືອນປີເກີດ	04/01/1972
ສັນຊາດ	ລາວ
ວຸດການສຶກສາ	ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລ ຂອນແກ່ນ ປະເທດໄທ
ຕຳແໜ່ງງານໃນປະຈຸບັນ	ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍປະຕິບັດການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ການເຂົ້າຮ່ວມກອງປະຊຸມຕ່າງໆ ສະສົມ 9 ເດືອນປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 3 ຄັ້ງ. - ກອງປະຊຸມຄະນະກຳມະການກວດສອບ 3 ຄັ້ງ. - ກອງປະຊຸມຄະນະກຳມະການຄັດເລືອກ 1 ຄັ້ງ. - ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ 1 ຄັ້ງ - ກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ 1 ຄັ້ງ

7. ທ່ານ ບຸນທະວີ ສິມມາໄຊ



ວັນເດືອນປີເກີດ	06/04/1982
ສັນຊາດ	ລາວ
ວຸດການສຶກສາ	- ປະລິຍາຕີ ບໍລິຫານທຸລະກິດ, ວິທະຍາໄລ ເຕັກນິກປາກປ່າສັກ, ປະເທດລາວ - ກຳລັງສຶກສາປະລິນຍາໂທ ບັນຊີ - ການເງິນ,ມະຫາວິທະຍາໄລແຫ່ງຊາດລາວ
ຕຳແໜ່ງງານໃນປະຈຸບັນ	ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ການເຂົ້າຮ່ວມກອງປະຊຸມຕ່າງໆ ສະສົມ 9 ເດືອນປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 3 ຄັ້ງ.

8. ທ່ານ ພິພົບ ວາດສະໜາອາຊາສະກຸນ



ວັນເດືອນປີເກີດ	21/05/1970
ສັນຊາດ	ໄທ
ວຸດການສຶກສາ	ປະລິນຍາຕີ ມະນຸດສາດ ມະຫາວິທະຍາໄລກະເສດສາດ ປີ 1993.
ຕຳແໜ່ງງານໃນປະຈຸບັນ	ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL.

ການເຂົ້າຮ່ວມກອງປະຊຸມ ຕ່າງໆ ສະສົມ 9 ເດືອນປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 3 ຄັ້ງ.

9. ທ່ານ ນາງ ຊູຕ໊ການ ສີແສງຈັນ



ວັນເດືອນປີເກີດ	25/04/1969
ສັນຊາດ	ໄທ
ວຸດການສຶກສາ	ປະລິນຍາໂທ ບໍລິຫານທຸລະກິດມະຫາບັນດິດ ມະຫາວິທະຍາໄລ ຂອນແກ່ນ
ຕຳແໜ່ງງານໃນປະຈຸບັນ	ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີ ແລະ ການເງິນ Siam Global House PCL.
ການເຂົ້າຮ່ວມກອງປະຊຸມ ຕ່າງໆ ສະສົມ 9 ເດືອນປີ 2026	- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ. - ກອງປະຊຸມສະພາບໍລິຫານ 3 ຄັ້ງ.

2.3. ຄະນະຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ



CFO



CEO



COO

ທ່ານ ພັນໂນລາ ສຸຄະບັນດິດ
ຮອງຜູ້ອຳນວຍການໃຫຍ່/
ຜູ້ອຳນວຍການຝ່າຍການເງິນ.

ທ່ານ ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່

ທ່ານ ກິດສະດາ ສຸຄະບັນດິດ
ຮອງຜູ້ອຳນວຍການໃຫຍ່/
ຜູ້ອຳນວຍການຝ່າຍປະຕິບັດການ.

3. ການເຄື່ອນໄຫວຂອງສະພາບໍລິຫານ 9 ເດືອນສະສົມ ປີ 2026

- ບໍລິສັດໄດ້ມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ຈຳນວນ 1 ຄັ້ງ.
- ສະພາບໍລິຫານ ໄດ້ມີການຈັດກອງປະຊຸມສະພາບໍລິຫານຈຳນວນ 3 ຄັ້ງ.
- ຄະນະກຳມະການກວດສອບພາຍໃນ ໄດ້ມີການຈັດກອງປະຊຸມ ຈຳນວນ 3 ຄັ້ງ.
- ຄະນະກຳມະການຄັດເລືອກ ໄດ້ມີການຈັດກອງປະຊຸມ ຈຳນວນ 1 ຄັ້ງ.
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ມີການຈັດກອງປະຊຸມ ຈຳນວນ 1 ຄັ້ງ.
- ຄະນະກຳມະການກຳນົດຄ່າຕອບແທນ ໄດ້ມີການຈັດກອງປະຊຸມ ຈຳນວນ 1 ຄັ້ງ.

4. ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ

ສຳລັບສະມາຊິກສະພາບໍລິຫານສະເພາະທີ່ເປັນສະມາຊິກອິດສະຫຼະ ຈະມີຄ່າຕອບແທນເປັນເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະຄັ້ງໂດຍແບ່ງອອກຄື:

- ປະທານສະພາບໍລິຫານ: 10,000,000 ກີບ/ຄັ້ງ
- ຮອງປະທານສະພາບໍລິຫານ: 6,600,000 ກີບ/ຄັ້ງ
- ສະມາຊິກສະພາບໍລິຫານ: 6,600,000 ກີບ/ຄັ້ງ

VI. ຄວາມຮັບຜິດຊອບຕໍ່ສັງຄົມ

1. ການມອບພັນທະອາກອນ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ປະຕິບັດຢູ່ພາຍໃຕ້ກົດໝາຍຂອງ ສປປ ລາວ ໂດຍສະເພາະກົດໝາຍສ່ວຍສາອາກອນຢ່າງເຂັ້ມງວດເຫັນໄດ້ຈາກການປະຕິບັດພັນທະມອບອາກອນໃຫ້ລັດເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ, ອາກອນກຳໄລ ເປັນຕົ້ນ.

<u>ການມອບພັນທະອາກອນໃຫ້ລັດປະຈຳ ໄຕມາດ 3 ປີ 2026</u>

ລຳດັບ	ລາຍການ	ລວມມູນຄ່າ (ກີບ) 2026	ລວມມູນຄ່າ (ກີບ) 2025
1	ພາສີນຳເຂົ້າ	1,363,110,200	1,789,419,000
2	ອາກອນມູນຄ່າເພີ່ມ	26,605,890,253	23,473,308,303
3	ອາກອນເງິນເດືອນ	2,518,257,189	1,935,971,830
4	ອາກອນຊົມໃຊ້	-	-
5	ອາກອນກຳໄລ	-	-
	ລວມ	**30,487,257,642**	**27,198,699,133**

<u>ການມອບພັນທະອາກອນໃຫ້ລັດ 9 ເດືອນສະສົມ ປີ 2026</u>

ລຳດັບ	ລາຍການ	ລວມມູນຄ່າ (ກີບ) 2026	ລວມມູນຄ່າ (ກີບ) 2025
1	ພາສີນຳເຂົ້າ	4,673,848,400	4,683,827,300
2	ອາກອນມູນຄ່າເພີ່ມ	86,855,746,888	70,665,532,693
3	ອາກອນເງິນເດືອນ	7,250,134,536	5,561,962,788
4	ອາກອນຊົມໃຊ້	-	2,089,700
5	ອາກອນກຳໄລ	2,000,000,000	2,000,000,000
	ລວມ	**100,779,729,824**	**82,913,412,481**

2. ການອຸປະຖຳ ແລະ ການຊ່ວຍເຫຼືອສັງຄົມ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີກິດຈະກຳຊ່ວຍເຫຼືອສັງຄົມ ຫຼາຍໂຄງການ ໃນໄລຍະໄຕມາດ 3 ທີ່ຜ່ານມາມີດັ່ງນີ້:

- ວັນທີ 28 ກໍລະກົດ 2026 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີໂອກາດຕ້ອນຮັບຄະນະຕ໊ອແທນ ຈາກສະມາຄົມນັກລົງທຶນຮຸ່ນໄທ (SIAT) ຢ່າງເປັນທາງການ ທີ່ສາຂາສົມສະໜຸກ ນະຄອນຫຼວງວຽງຈັນ. ນຳໂດຍ ທ່ານ ອັດດາມາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແລະ ທ່ານ ຊັດຊະວະນັນ ສັນທິເດດ ນາຍົກສະມາຄົມນັກລົງທຶນຮຸ່ນໄທ (SIAT) ພ້ອມດ້ວຍຄະນະ.





- ວັນທີ 06/08/2026 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ມອບອຸປະກອນເພດານ ແລະ ຢີບຊຳ ໃຫ້ອຳນາດການປົກຄອງຕາແສງ ນາເສ ເມືອງ ທ່າແຂກ ແຂວງຄຳມ່ວນ.
- ວັນທີ 11/08/2026 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ມອບອຸປະກອນເຄື່ອງໃຊ້ໃຫ້ ປກສ ເມືອງ ປາກຊັນ ເພື່ອໃຊ້ປະຕິບັດໜ້າທີ່ ມູນຄ່າ 5,244,000 ກີບ.
- ວັນທີ 20/08/2026 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ມອບເງິນປະກອບສ່ວນງານບຸນປະເພນີຊ່ວງເຮືອ ທີ່ນະຄອນຫຼວງພະບາງ ຈຳນວນເງິນ 5,000,000 ກີບ.





- ວັນທີ 12/08/2026 ພະນັກງານບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຮ່ວມໃຈ ບໍລິຈາກເລືອດ ໃຫ້ແກ່ອົງການກາແດງລາວ ເພື່ອເປັນການຊ່ວຍເຫຼືອສັງຄົມ ແກ່ຜູ້ຕ້ອງການເລືອດ.











- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈັດ Promotion ປະຈຳໄຕມາດ 3.







VII. ນະໂຍບາຍກ່ຽວກັບການຄວບຄຸມພາຍໃນ

ບໍລິສັດ ມີນະໂຍບາຍໃນການຄຸ້ມຄອງພາຍໃນ ໂດຍໃຊ້ມາດຕະຖານການປະຕິບັດງານພາຍໃຕ້ລະບົບ ISO 9001 Version 2015 ແລະ ຍັງຄວບຄຸມດ້ວຍມາດຕະຖານຮ້ານ, ມາດຕະຖານການບໍລິການຕ່າງໆ, ມາດຕະຖານ 5 ສ ແລະ ມາດຕະຖານຄວາມປອດໄພ ພ້ອມນີ້ ກໍ່ມີການຄວບຄຸມດ້ວຍລະບົບຄອມພິວເຕີ ນຳໃຊ້ Software ທີ່ມີປະສິດທິພາບ ເພື່ອການຄຸ້ມຄອງ. ມີການຂໍອະນຸມັດຕາມຂັ້ນຕອນຂອງລະບົບ ພາຍໃຕ້ການກວດສອບຂອງທີມງານກວດສອບພາຍໃນ ແລະ ທີມງານກວດສອບພາຍນອກ ພ້ອມເສີມດ້ວຍລະບົບກ້ອງວົງຈອນປິດ ເພື່ອກວດກາຄວບຄຸມຈຸດບົກຜ່ອງຕ່າງໆ.

GCL INTERNATIONAL
UKAS MANAGEMENT SYSTEMS
ISO 9001 5965
Cert No. 75Q17255

VIII. ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ

ທຸລະກິດການຄ້າວັດສະດຸກໍ່ສ້າງໃນລາວມີປັດໃຈຄວາມສ່ຽງຫຼັກໃນປີຜ່ານມາຄື:

1. ພາລະໜີ້ສິນ ຂອງລູກຄ້າ
2. ອັດຕາແລກປ່ຽນ
3. ຕົ້ນທຶນສິນຄ້ານຳເຂົ້າ ແລະ ທາງອ້ອມສູງຂຶ້ນ
4. ໄພທຳມະຊາດຕ່າງໆ

ເຊິ່ງພວກເຮົາໄດ້ ບໍລິຫານຄວາມສ່ຽງຕ່າງໆ ໂດຍໃຊ້ກົນໄກການອະນຸມັດຕ່າງໆ ມີການພິຈາລະນາ ແລະ ກຳນົດວົງເງິນໃຫ້ບໍລິສັດ ແລະ ລູກຄ້າ, ທາງດ້ານອັດຕາແລກປ່ຽນ ແມ່ນເນື່ອງຈາກບໍລິສັດມີການນຳເຂົ້າໂດຍຖືກຕ້ອງຕາມກົດໝາຍຈຶ່ງສາມາດຊື້ເງິນຕາຈາກທະນາຄານໄດ້, ດ້ວຍສະພາວະເງິນເຟີ້ ແມ່ນຊອກຫາແຫຼ່ງສິນຄ້າທີ່ຖືກລົງ ແລະ ຕໍ່ລອງຈາກຫຼາຍປະເທດ ເພື່ອໃຫ້ໄດ້ສິນຄ້າທີ່ມີຄຸນນະພາບ ແລະ ລາຄາຖືກລົງ ເພື່ອຕອບຮັບກຳລັງຊື້ຂອງລູກຄ້າທີ່ຫຼຸດລົງ ແລະ ດ້ານໄພຕ່າງໆເຊັ່ນ: ນ້ຳຖ້ວມ, ໄຟໄໝ້, ພາຍຸ ແລະ ແຜ່ນດິນໄຫວເຫຼົ່ານີ້ເປັນຕົ້ນ ພວກເຮົາໄດ້ມີການຊື້ປະກັນໄພໄວ້ໃນແຕ່ລະສາຂາເພື່ອຮອງຮັບທຸກສະຖານະການທີ່ຈະເກີດຂຶ້ນ.

ຜູ້ອຳນວຍການໃຫຍ່
ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ທ່ານ ວັດດານາ ສຸຄະບັນດິດ